# ບົດທີ 14

# ລະບຽບແລະການຕັດສິນ ໃນຄຼິດສະຕະຈັກ




**1** ໃຫ້ອ່ານ ກຈກ 4:32-35

ກ. ພວກຄຼິດສະຕຽນໃນສະໄໝພະທຳກິດຈະການ ຖືວ່າສິ່ງຂອງທັງໝົດເປັນຂອງໃຜ? ____

ຂ. ຜູ້ທີ່ມີໄຮ່ນາ ຫຼືຢ້າວເຮືອນ ເຂົາເຮັດຫຍັງ? ______________________________

ຄ. ເຂົາເຮັດຫຍັງກັບເງິນຄ່າຂອງທີ່ຂາຍໄດ້? ______________________________

**2** ກຈກ 4:36-37 ເຫັນວ່າມີຄົນຜູ້ໜຶ່ງຊື່ໂຢເຊບໄດ້ຂາຍນາ.

ກ. ມີຜູ້ໃດບັງຄັບໃຫ້ເພິ່ນຂາຍບໍ່? ____________________________________

ຂ. ຄຼິດສະຕຽນທົ່ວໄປນັ້ນ ຖືກການບັງຄັບຫຼືສະ ມັກຂາຍ? ______________________

**3** ໃຫ້ທ່ານອ່ານ ກຈກ 5:1-11 ແລ້ວຂີດຂ້າອອກຂໍ້ໃດທີ່ບໍ່ຖືກ.

ກ. ອານາເນຍກັບຊະຟີລາໄດ້ຂາຍທີ່ດິນຂອງຕົນ

ຂ. ເຂົາເອົາເງິນຄ່າດິນໃຫ້ເຈົ້າແຂວງ

ຄ. ເຂົາເກັບເງິນສ່ວນໜຶ່ງໄວ້

ງ. ເຂົາເອົາເງິນມາໃຫ້ສາວົກທັງໝົດ

ຈ. ເຂົາບອກພວກສາວົກວ່າ ຈະເອົາສ່ວນໜຶ່ງມາໂອນແລະເອົາສ່ວນໜຶ່ງໄວ້

ສ. ເຂົາໂອນແຕ່ສ່ວນດຽວ ຕົວະວ່າໂອນທັງໝົດ

ຊ. ເປໂຕອະທິບາຍວ່າດິນແລະເງິນນັ້ນ ຢູ່ໃນອຳນາດຂອງອານາເນຍ

ຍ. ອານາເນຍຕົວະຕໍ່ພະເຈົ້າ

ດ. ນາງຊະຟີລາບໍ່ຮູ້ເລື່ອງຄວາມຕົວະນັ້ນ

ຕ. ນາງຮ່ວມຕົວະ

ຖ. ມີແຕ່ອານາເນຍຕາຍຜູ້ດຽວ

ທ. ມີແຕ່ຊະຟີລາຕາຍຜູ້ດຽວ

ນ. ຕາຍທັງສອງ

**4** ໃນກຈກ 5:4 ເຫັນວ່າດິນນັ້ນເປັນຂອງອານາເນຍ (ເລືອກ)

ກ. ______ ເພິ່ນຖືກບັງຄັບຂາຍ

ຂ. ______ ມີສິດຂາຍແລະເກັບເງິນໄວ້

ຄ. ______ ບໍ່ມີສິດເກັບເງິນນັ້ນ

**5** ໃຫ້ອ່ານ ກຈກ 5:2 ແລະ 5:4 ອີກ.

ກ. ໃນຂໍ້ 2 ເພິ່ນເອົາເທົ່າໃດມາມອບໄວ້ແກ່ພວກສາວົກ? ______________________

ຂ. ບາບທີ່ເພິ່ນເຮັດນັ້ນຄືບາບໃດ? (ເລືອກຂໍ້ດຽວ)

______ ເກັບສ່ວນໜຶ່ງໄວ້ ______ ຕົວະຕໍ່ພະເຈົ້າ ______ ຂາຍດິນໂດຍບໍ່ຂໍອະນຸຍາດ

**6** ຂໍ້ໃດຕໍ່ໄປນີ້ ສະແດງວ່າອານາເນຍຕົວະ (ເລືອກ ຂໍ້ດຽວ)

ກ. ______ ອານາເນຍເອົາແຕ່ສ່ວນໜຶ່ງມາໂອນໃຫ້ພວກສາວົກ

ຂ. ______ ອານາເນຍເອົາແຕ່ສ່ວນໜຶ່ງມາໂອນ ແຕ່ເພິ່ນເຮັດຄືເອົາມາທັງໝົດ

ຄ. ______ ເມຍຂອງອານາເນຍຊື່ວ່າຊະຟີລາ

**7** ກ. ອານາເນຍເຮັດບາບຫຍັງ? ________________________________________

ຂ. ຮັບໂທດຫຍັງ? ________________________________________________

**8** ກ. ແມ່ນພະເຈົ້າຫຼືເປໂຕທີ່ຕັດສິນອານາເນຍ? ____________________________

ຂ. ເປັນຫຍັງພະເຈົ້າລົງໂທດໜັກປານນັ້ນ? (ຕື່ມຄວາມຂາດ) ເພື່ອສະແດງວ່າພະເຈົ້າຈະທົນຄວາມ __________________ ໃນ ____________________________ ບໍ່ໄດ້.

**9** ໃນເມື່ອຄຼິດສະຕະຈັກເລີ້ມຕົ້ນໃໝ່ນັ້ນ ພະເຈົ້າສອນເຂົາເລື່ອງລະບຽບວິໄນໃນຄຼິດສະຕະຈັກ ໂດຍທຳໂທດໜັກຕໍ່ອາ ນາເນຍແລະຊະຟີລາ. ພະເຈົ້າສອນຫຍັງ? ________________

______________________________________________________________

**10** ຖ້າພະເຈົ້າບໍ່ໄດ້ຕັດສິນລົງໂທດຕໍ່ອານາເນຍແລະຊະຟີລາຄວາມບາບໃນຄຼິດສະຕະຈັກອາດຈະແຜ່ອອກໄປ ຈົນ ກວ່າຄຼິດສະຕະຈັກຈະອ່ອນແອລົງ. ພະເຈົ້າເຮັດຫຍັງຈິ່ງຈະບໍ່ໃຫ້ຄຼິດສະຕະຈັກອ່ອນແອໄປ? ______________________________________________

______________________________________________________________

**11** ກ. ອານາເນຍແລະຊະຟີລາເຮັດບາບໃດ? ________________________________

ຂ. ແມ່ນໃຜລົງໂທດໃຫ້ເຂົາຕາຍ? ____________________________________

ຄ. ໂທດຮ້າຍນັ້ນສອນເຮົາວ່າຢ່າງໃດ? ________________________________

**12** ພະເຈົ້າຕ້ອງການຄຼິດສະຕະຈັກທີ່ບໍລິສຸດ ຈຶ່ງທົນບາບໃນຄຼິດສະຕະຈັກບໍ່ໄດ້. ໃຫ້ອ່ານ 1 ໂກລິນໂທ 5:6-7 ສອງຂໍ້ ພະ ຄຳພີນັ້ນຍົກສັນຍາລັກໃດມາປຽບກັບບາບທີ່ແຜ່ອອກໃນຄຼິດສະຕະຈັກ? ______________________________

ເຊື້ອແປ້ງທີ່ເຂົາໃຊ້ເຮັດເຂົ້າຈີ່ ເປັນເຊື້ອຊະນິດໜຶ່ງທີ່ແຜ່ອອກຢ່າງບໍ່ຈຳກັດຈັກເທື່ອ.

**13** ຖ້າຄຼິດສະຕຽນໃນຄຼິດສະຕະຈັກໃດກະທຳບາບຕໍ່ໄປ ຄວາມບາບນັ້ນຈະເປັນຢ່າງໃດ? ____ ______________________________

**14** ນັ້ນແຫຼະ ຄືເຫດທີ່ພະເຈົ້າຕັດສິນພວກຄຼິດສະຕຽນເຮົາ. ຖ້າພະເຈົ້າຕິສອນເຮົາ ແຕ່ເຮົາບໍ່ປ່ຽນ ດັ່ງນັ້ນທາງຄຼິດສະຕະຈັກ ສົມຄວນລົງມືຕັດສິນຜູ້ທີ່ຜິດ. ໃຫ້ອ່ານ 1 ໂກລິນໂທ 5:12-13 (ເລືອກຂໍ້ທີ່ຖືກ)

ກ. ______ ຄຼິດສະຕະຈັກຄວນຕັດສິນແຕ່ສະເພາະຄຼິດສະຕຽນທີ່ຕົກໃນບາບ

ຂ. ______ ຄຼິດສະຕະຈັກຄວນຕັດສິນທັງຄົນໃນແລະຄົນນອກ

ຄ. ______ ຄຼິດສະຕະຈັກຄວນຕັດສິນແຕ່ສະເພາະຄົນທີ່ບໍ່ເປັນຄຼິດສະຕຽນ

**15** ຖ້າມີຄຼິດສະຕຽນຄົນໃດທີ່ກະທຳບາບຕໍ່ໄປ ແມ່ນພວກໃດຄວນຕັດສິນ? ______________

**16** ໂປໂລຍົກກ່າວເລື່ອງບາບທີ່ໜັກຫຼາຍໃນຄຼິດສະຕະຈັກຢູ່ໂກລິນໂທ.

ກ. ໃຫ້ອ່ານ 1 ໂກລິນໂທ 5:1 ກ່າວເລື່ອງບາບໃດ? ______________________________

ຂ. ບາບໃດທີ່ຄຼິດສະຕະຈັກຄວນລົງມືຕັດສິນ? (ເລືອກ)

______ ບາບທຸກຢ່າງແລະທຸກເທື່ອ

______ ແຕ່ສະເພາະບາບໃນຄວາມຄິດ

______ ບາບທີ່ເຂົາກະທຳຕໍ່ໄປບໍ່ເຊົາ

**17** ໃຫ້ອ່ານ 1 ໂກລິນໂທ 5:4-5 ອາຈານໂປໂລບອກໃຫ້ເຂົາຕັດສິນຕາມບາດກ້າວໃດ? (ເລືອກ)

ກ. ______ ຕັດສິນໃນນາມຂອງຄຼິດສະຕະຈັກ

ຂ. ______ ຕັດສິນໃນນາມແລະອຳນາດຂອງພະເຢຊູ

ຄ. ______ ມອບຜູ້ນັ້ນໄວ້ໃຫ້ຊາຕານທຳລາຍເນື້ອກາຍ

ງ. ______ ໃຫ້ປະຊຸມກັນແລະກັນ

ຈ. ______ ປ່ອຍໃຫ້ເພິ່ນກະທຳບາບ ຢ້ານວ່າເພິ່ນຈະເສຍໃຈ

ສ. ______ ຖືວ່າບໍ່ແມ່ນເລື່ອງທີ່ສຳຄັນ

**18** ໃນ 1 ກລທ 5:5 ມີຄວາມທີ່ອາດຈະເຂົ້າໃຈຍາກຄືຄຳວ່າ "ຈຶ່ງມອບຜູ້ນັ້ນໄວ້ໃຫ້ຊາຕານທຳລາຍເນື້ອກາຍ." ຖ້າຈະຕັດ ສິນຄົນອອກຈາກຄຼິດສະຕະຈັກກໍຄ້າຍຄືວ່າຈະມອບເພິ່ນໄວ້ໃຫ້ກັບໄປຢູ່ໃນໂລກ. ແມ່ນວິນຍານໃດທີ່ປົກຄອງໃນໂລກ ນີ້? ______________________________

**19** ຖ້າຈະມອບ ຜູ້ນັ້ນໄວ້ໃຫ້ຊາຕານທຳລາຍເນື້ອກາຍ ກໍເບິ່ງຄືຈະໃຫ້ຜູ້ກ່ຽວຮັບຄວາມລຳບາກ ແຕ່ຈຸດປະສົງທີ່ຈະໃຫ້ຮັບ ຄວາມ ລຳບາກຈາກຊາຕານ ເພື່ອຫຍັງ? ________________

________________________________________________________________

**20** ຖ້າມີການຈຳເປັນຄຼິດສະຕະຈັກມີສິດທີ່ຈະຕັດສິນຄົນທີ່ບໍ່ຍອມປະໃຈເກົ່າເອົາໃຈໃໝ່ໃຫ້ອອກຈາກພວກທີ່ປະຊຸມ.

ກ. ການຕັດສິນນັ້ນ ເປັນເລື່ອງທີ່ເປີດເຜີຍຫຼືເລື່ອງລັບ? ________________________

ຂ. ຕອນພະຄຳພີທີ່ກ່າວເລື່ອງການຕັດສິນຄົນໃຫ້ອອກຈາກຄຼິດສະຕະຈັກຢູ່ໃນພະທຳ 1 ກລທ ບົດແລະຂໍ້ໃດ? ________________________________________________

**21** ແຕ່ກ່ອນທ່ານໄດ້ຮຽນມາເລື່ອງການແກ້ບັນຫາລະຫວ່າງພີ່ນ້ອງທີ່ເຮັດຜິດຕໍ່ກັນແລະກັນໃນ ມັດທາຍ 18:15-19. ຂໍ້ໃດທີ່ຍົກເລື່ອງການແຈ້ງຄວາມນັ້ນຕໍ່ທັງຄຼິດສະຕະຈັກ? ___________

**22** ຖ້າຄຼິດສະຕຽນຄົນໃດຕົກໃນບາບແລະບໍ່ຍອມຖິ້ມໃຈເກົ່າເອົາໃຈໃໝ່ ທັງຄຼິດສະຕະຈັກມີສິດລົງໂທດຢ່າງໃດ? ________________________________________________

**23** ແມ່ນໃຜມີສິດທີ່ຈະລົງໂທດນັ້ນ? (ເລືອກ)

ກ. _____ ທີ່ປະຊຸມທັງມວນ

ຂ. _____ ແຕ່ສະເພາະພວກເຖົ້າແກ່

ຄ. _____ ບຸກຄົນໃດກໍໄດ້

**24** ຈະລົງໂທດເຖິງຂະໜາດໃດຂຶ້ນຢູ່ກັບທີ່ປະຊຸມ ເຂົາອາດຈະບໍ່ໃຫ້ມີພາລະໃນຄຼິດສະຕະຈັກກໍໄດ້ ອາດຈະບໍ່ໃຫ້ຮັບສິນ ມະຫາສະໜິດຫຼືອາດຈະບໍ່ໃຫ້ເຂົ້າຮ່ວມເລີຍ. ລາຍລະອຽດໃນການຕັດສິນຂຶ້ນຢູ່ກັບໃຜ? ____________________________________________

**25** ໃນຂໍ້ພະຄຳພີຕໍ່ໄປນີ້ ມີຂໍ້ໃດທີ່ສອນເລື່ອງຄວາມສຳພັນລະຫວ່າງທີ່ປະຊຸມແລະພີ່ນ້ອງຄຼິດສະຕຽນທີ່ບໍ່ຍອມປະຄວາມ ບາບ? (ເລືອກ)

ກ. _____ 1 ກລທ 5:11

ຂ. _____ 2 ທຊນ 3:6

ຄ. _____ 2 ທຊນ 3:14-15

ງ. _____ 2 ທຊນ 3:18

**26** ໃຫ້ອ່ານ 1 ຕີໂມທຽວ 5:20 ການຕັດສິນນີ້ ບໍ່ໜັກທໍ່ກັບການຕັດອອກຈາກທີ່ປະຊຸມ.

ກ. ການຕັດສິນນີ້ ປະກອບໂດຍຫຍັງ? ____________________________________

ຂ. ການຕັດສິນຢ່າງນີ້ເພື່ອຄົນໃດ? ______________________________________

**27** ທີ່ເຮົາຮຽນມາແລ້ວ ມີການຕັດສິນສອງຢ່າງໃດ?

________________________________________________________________

________________________________________________________________

**28** ຈະໃຫ້ຕັດສິນຕໍ່ໜ້າໃຜ? ____________________________________________

**29** ໃຫ້ອ່ານ 2 ກລທ 13:1 ແລະ 1 ຕມທ 5:19.
ຈະເຮັດຢ່າງໃດຈຶ່ງຈະຫຼີກເວັ້ນຈາກການຟ້ອງບໍ່ຈິງ?____________________________

**30** ໃຫ້ອ່ານ 1 ກລທ 5:11 ຈະລົງໂທດໜັກນີ້ໃຫ້ພວກໃດ? (ເລືອກຂໍ້ດຽວ)
ກ. ______ ຄົນຫຼິ້ນຊູ້ ຄົນໂລບ ຄົນຂາບໄຫວ້ພະທຽມ ຄົນທາຍາບຊ້າ ຄົນຂີ້ເຫຼົ້າ ແລະຄົນຂີ່ມຂູ່
ຂ. ______ ຄົນທີ່ເຮັດບາບຢ່າງອື່ນ ໆ
ຄ. ______ ຄົນທີ່ເຮັດບາບແລ້ວຕໍ່ໄປຖິ້ມໃຈເກົ່າເອົາໃຈໃໝ່

**31** ທຸກເທື່ອທີ່ຄຣິດສະຕະຈັກຈະຕັດສິນຄົນຢ່າງນັ້ນ ຄວນມີເປົ້າໝາຍປາຍທາງທີ່ຈະນຳຜູ້ກ່ຽວໃຫ້ກັບຄືນມາອີກ. ບໍ່ແມ່ນທີ່ ຈະ ປ່ອຍປະເພິ່ນແລ້ວກໍແລ້ວໄປ 1 ກລທ 5:5 ບອກວ່າຈະໃຫ້ຕັດສິນເພິ່ນເພື່ອໃຫ້ຫຍັງ? ________________________________________________

________________________________________________________________

**32** ການຕັດສິນມີຈຸດປະສົງທີ່ຈະໃຫ້ຄົນນັ້ນ ກັບມາຫາພະເຈົ້າແລະມາຮ່ວມກັບພີ່ນ້ອງຄຣິດສະຕຽນອີກ. ໃນ 2 ໂກລິນໂທ 2:6-11 ອາຈານໂປໂລຍົກເລື່ອງຄົນຜູ້ໜຶ່ງທີ່ຖືກໂທດມາ.
(ເຮົາບໍ່ຮູ້ວ່າຂໍ້ນີ້ອ້າງເຖິງຄົນດຽວໃນ 1 ກລທ 5 ຫຼືບໍ່)
ກ. ໃນ 2 ກລທ 2:7 ພວກຄຣິດສະຕຽນນັ້ນຄວນເຮັດຫຍັງ? ________________________
ຂ. ເປັນຫຍັງຄວນເຮັດຢ່າງນັ້ນ? __________________________________________

**33** ພະຄຳພີຍົກສອນເລື່ອງການຕັດສິນໃນຄຣິດສະຕະຈັກສອງຢ່າງໃດ?
ກ. ______________________________________________________________
ຂ. ______________________________________________________________

**34** ຕາມໃນ ຄາລາເຕຍ 6:1 ພີ່ນ້ອງຄຣິດສະຕຽນຄວນມີທ່າທີຢ່າງໃດໃນການຊ່ວຍຄົນທີ່ຫຼົງຜິດ?

________________________________________________________________

**35** ຕໍ່ໄປໃນຂໍ້ດຽວນັ້ນ ເຮົາຄວນຄິດເຖິງຕົນເອງຢ່າງໃດ? (ເລືອກ)
ກ. ______ ໂດຍສັງເກດຕຳແໜ່ງຂອງເຮົາ
ຂ. ______ ສຳນຶກວ່າຕົວເຮົາເອງຈະບໍ່ຕົກໃນບາບຈັກເທື່ອ
ຄ. ______ ຢ້ານວ່າຕົນເອງຈະຖືກຊັກຈູງໃຫ້ລົງໄປ

**36** ກ. ຖ້າເຮົາຈະຮັບຮູ້ວ່າ ຕົວເຮົາເອງອາດຈະຕົກໃນບາບໄດ້ ເຮົາຈະມີທ່າທີໃດ? (ເລືອກ)
______ ໄວ້ໃຈໃນຕົວເອງໄດ້ ______ ຖ່ອມຕົວລົງ ______ ໄດ້ບຸນຄຸນ
ຂ. ຖ້າເຖິງທີ່ເຮົາຈະຕ້ອງຕັດສິນພີ່ນ້ອງຄຣິດສະຕຽນ ເຮົາຄວນມີທ່າທີໃດ? (ຕື່ມຄວາມທີ່ຂາດ)
ສຸ ______________________ ແລະ ຖ່ອມ ______________________________

**37** ອາຈານໂປໂລສອນເລື່ອງການນຳພີ່ນ້ອງທີ່ຫຼົງຜິດກັບຄືນມາ
ກ. ໃນ 2 ກລທ ບົດແລະຂໍ້ໃດ? __________________________________________
ຂ. ຄລຕ ບົດແລະຂໍ້ໃດ? ______________________________________________

**38** ກ. ເຫັນພີ່ນ້ອງທີ່ຫຼົງຜິດເຄີຍຖືກຕັດສິນແລ້ວຖ້າເພິ່ນຖິ້ມໃຈເກົ່າເອົາໃຈໃໝ່ມີຈຸດໝາຍປາຍທາງຢ່າງໃດ? ______

ຂ. ຖ້າຈຳເປັນຕ້ອງຕັດສິນຄົນທີ່ຫຼົງຜິດ ເຮົາຄວນມີທ່າທີໃດ? ______ ແລະ ______

**39** ເຫັນຄົນທີ່ຫຼົງຜິດກັບມາໃໝ່ ທາງຄຼິດສະຕະຈັກຄວນຮັບເພິ່ນກັບມາທັນທີ ຫຼືລໍຖ້າຄາວໜຶ່ງກ່ອນ? ______

**40** ກ. ໃນພະທຳໃດແລະບົດໃດ ອາຈານໂປໂລສອນເລື່ອງທີ່ຈຳເປັນຕັດສິນລົງໂທດພີ່ນ້ອງຄຼິດສະຕຽນທີ່ຫຼົງຜິດ? ______

ຂ. ພະທຳໃດ ແລະບົດໃດທີ່ເພິ່ນກ່າວເລື່ອງການນຳຄົນຢ່າງນັ້ນກັບຄືນມາໃໝ່? (ສອງບ່ອນ)

______

**41** ກ. ເປົ້າໝາຍໃນການຕັດສິນນັ້ນຄືຫຍັງ? ______

______

ຂ. ຜູ້ທີ່ຈະລົງມືຕັດສິນຄົນເຫຼົ່ານັ້ນ ຄວນມີທ່າທີໃດ? ______ ແລະ ______

*ໃຫ້ເສັງຕາມເຄີຍ!*

**ຄຳຕອບ:**

**1** *ກ. ຂອງກາງ ຂ. ເຂົາຂາຍ ຄ. ເອົາມາມອບໄວ້ໃນມືຂອງພວກອັກຄະສາວົກ*

**2** *ກ. ບໍ່ມີ ຂ. ສະມັກ*

**3** *ຂີດຂ້າອອກ ຂ ງ ຈ ດ ຖ ທ*

**4** *ຂ ຖືກ*

**5** *ກ. ສ່ວນໜຶ່ງ ຂ. ຕົວະຕໍ່ພະເຈົ້າ*

**6** *ຂ ຖືກ*

**7** *ກ. ຕົວະພະເຈົ້າ ຂ. ຕາຍ*

**8** *ກ. ພະເຈົ້າ ຂ. ບາບ... ຄຼິດສະຕະຈັກ*

**9** *ສອນວ່າພະອົງທົນຄວາມບາບໃນຄຼິດສະຕະຈັກບໍ່ໄດ້*

**10** *ພະເຈົ້າຕັດຊີວິດຂອງອານາເນຍ ແລະຊະຟີລາ ໃນເມື່ອທີ່ເຂົາຕົວະຕໍ່ພະເຈົ້າ. (ຄຳຄ້າຍຄືກັນກໍໄດ້)*

**11** *ກ. ຕົວະຕໍ່ພະເຈົ້າ ຂ. ພະເຈົ້າ ຄ. ພະເຈົ້າທົນບາບໃນຄຼິດສະຕະຈັກບໍ່ໄດ້*

**12** *ເຊື້ອແປ້ງ*

**13** *ແຜ່ອອກ (ຈົນບໍ່ມີການຈຳກັດ)*

**14** *ກ ຖືກ*

**15** *ຄຼິດສະຕະຈັກ*

**16** *ກ. ການຜິດຊາຍຍິງ (ຫຼິ້ນຊູ້) ຂ. ບາບທີ່ເຂົາກະທຳຕໍ່ໄປບໍ່ເຊົາ*

**ຄຳຕອບ (ຕໍ່):**

**17** *ຂ ຄ ງ ຖືກ*

**18** *ຊາຕານ*

**19** *ເພື່ອໃຫ້ຈິດວິນຍານຂອງລາວໄດ້ພົ້ນໃນວັນຂອງພະຜູ້ເປັນເຈົ້າ*

**20** *ກ. ເລື່ອງເປີດເຜີຍ ຂ. 1 ກລທ 5:4-5*

**21** *ຂໍ້ 17*

**22** *ຕັດອອກຈາກປະຊຸມ*

**23** *ກ ຖືກ*

**24** *ທີ່ປະຊຸມ*

**25** *ກ ຂ ຄ ຖືກ*

**26** *ກ. ການຕິຕຽນເຂົາຊ້ອງໜ້າຄົນທັງປວງ ຂ. ຄົນທີ່ຍັງເຮັດຜິດຢູ່*

**27** *ການຕັດອອກຈາກທີ່ປະຊຸມ ການຕິຕຽນເຂົາຊ້ອງໜ້າຄົນທັງປວງ*

**28** *ຕໍ່ໜ້າທີ່ປະຊຸມ (ຄົນທັງປວງກໍໄດ້)*

**29** *ໃຫ້ມີພະຍານ 2 ຫຼື 3 ຄົນ*

**30** *ກ ຖືກ*

**31** *ໃຫ້ຈິດວິນຍານຂອງລາວໄດ້ພົ້ນໃນວັນຂອງອົງພະຜູ້ເປັນເຈົ້າ.*

**32** *ກ. ຍົກໂທດແລະໃຫ້ເພິ່ນຮັບຄວາມບັນເທົາທຸກ*
*ຂ. ຢ້ານວ່າຄົນນັ້ນຈະຈົມລົງໃນຄວາມທຸກໂສກອັນເຫຼືອລົ້ນ*

**33** *ກ. ການຕັດອອກຈາກທີ່ປະຊຸມ ຂ. ການຕິຕຽນເຂົາຊ້ອງໜ້າຄົນທັງປວງ*

**34** *ດ້ວຍຄວາມອ່ອນສຸພາບ*

**35** *ຄ ຖືກ*

**36** *ກ. ຖ່ອມຕົວລົງ ຂ. ພາບ… ຕົວລົງ*

**37** *ກ. 2 ກລທ 2:6-11 ຂ. ຄລຕ 6:1*

**38** *ກ. ໃຫ້ຄືນດີກັບຄຣິດສະຕະຈັກອີກ ຂ. ສຸພາບ ແລະ ຖ່ອມຕົວລົງ*

**39** *(ໃຫ້ແລກປ່ຽນຄວາມຄິດເຫັນໃນປະຊຸມ)*

**40** *ກ. 1 ກລທ ບົດ 5 ຂ. ຄລຕ ບົດ 6 ແລະ 2 ກລທ ບົດ 2*

**41** *ກ. ໃຫ້ເພິ່ນຖິ້ມໃຈເກົ່າເອົາໃຈໃໝ່ ແລະນຳກັບຄືນມາໃນທີ່ປະຊຸມ*
*ຂ. ສຸພາບ ແລະ ຖ່ອມຕົວລົງ*